

# ຄຳໝັ້ນສັນຍາຂອງລັດຖະບານລາວ ຕໍ່ FP2030

**ວິໄສທັດຂອງ ລັດຖະບານ ແຫ່ງ ສປປ ລາວ ໃນວຽກງານ ວາງແຜນຄອບຄົວຮອດປີ** 2030:

ເລັ່ງລັດຄວາມຄືບໜ້າສູ່ການບັນລຸການເຂົ້າເຖິງ ສິດທິດ້ານ ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນຢ່າງທົ່ວເຖິງ

## 1. ປັບປຸງການເຂົ້າເຖິງລະບົບສຸຂະພາບທີ່ຕອບສະໜອງແກ່ໄວໜຸ່ມ ແລະ ເຍົາວະຊົນສຳລັບການນຳໃຊ້ວິທີຄຸມກຳເນີດ



ເພື່ອຫຼຸດອັດຕາການຕາຍຂອງແມ່ ແລະ ອັດຕາການຖືພາໃນໄວໜຸ່ມ ແລະ ເພື່ອແກ້ໄຂຄວາມຕ້ອງການໃນການວາງແຜນຄອບຄົວທີ່ບໍ່ໄດ້ຮັບການຕອບສະໜອງ ໃນບັນດາໄວໜຸ່ມຍິງທີ່ບໍ່ທັນແຕ່ງງານ, ລັດຖະບານລາວຈະ:

- ບັງຄັບໃຊ້ກົດໝາຍວ່າດ້ວຍການຂຶ້ນທະບຽນຄອບຄົວ ແລະ ກົດໝາຍຄອບຄົວ
- ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນຜ່ານການລິເລີ່ມ CONNECT ໃນວຽກງານສິດທິດ້ານສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ລວມເຖິງການບໍລິການທີ່ເປັນມິດແກ່ໄວໜຸ່ມ ແລະ ເຍົາວະຊົນໃນຊຸມຊົນ
- ຂະຫຍາຍການສຶກສາທາງເພດແບບສົມບູນຈາກ ການສຶກສາຂັ້ນອານຸປະລິນຍາ ຈົນຮອດການສຶກສາຊັ້ນສູງໃນ ສ ປປ ລາວ
- ສ້າງການຮ່ວມມືກັບອົງການຈັດຕັ້ງມະຫາຊົນ/ອົງການຈັດຕັ້ງທາງສັງຄົມ/ອົງການທີ່ບໍ່ຂຶ້ນກັບລັດ ແລະ ພາກເອກະຊົນ ເພື່ອສ້າງຂະບວນການໂຄສະນາ ລະດັບຊາດ ແລະ ທ້ອງຖິ່ນ ກ່ຽວກັບການປ້ອງກັນການຖືພາໃນໄວໜຸ່ມ ແລະ ການແຕ່ງງານໃນເດັກ.
- ເພີ່ມທະວີການປະສານງານ ແລະ ການຮ່ວມມືຈາກຫຼາຍຂະແໜງການ ເພື່ອປ້ອງກັນ/ຫຼຸດຜ່ອນການຖືພາໃນໄວໜຸ່ມ.
- ປັບປຸງການແຍກປະເພດຂໍ້ມູນຢູ່ໃນລະບົບ DHIS2.
- ເສີມຂະຫຍາຍນະວັດຕະກຳ ແລະ ເຕັກໂນໂລຊີດິຈິຕອລ ເພື່ອເພີ່ມທະວີການເຂົ້າເຖິງຂໍ້ມູນ ແລະ ການນຳໃຊ້ວິທີຄຸມກຳເນີດ

## 2. ຮັບປະກັນຄວາມພ້ອມຂອງຂໍ້ມູນ ແລະ ການບໍລິການບໍລິການທີ່ເປັນມິດຕໍ່ໄວໜຸ່ມ ຫຼື ການວາງແຜນຄອບຄົວ (YFS/FP) ທີ່ມີຄຸນະພາບ ແລະ ປອດໄພ ເພື່ອຫຼຸດຄວາມຕ້ອງການໃນການວາງແຜນຄອບຄົວທີ່ບໍ່ໄດ້ຮັບການຕອບສະໜອງ ມາເປັນ 12% ພາຍໃນປີ 2030.

ເພື່ອແກ້ໄຂອັດຕາການຖືພາໃນໄວໜຸ່ມທີ່ສູງ ແລະ ຄວາມຕ້ອງການໃນການວາງແຜນຄອບຄົວທີ່ບໍ່ຕອບຖືກສະໜອງສູງຂອງໄວໜຸ່ມ, ເຊັ່ນດຽວກັນກັບການຂາດການເຂົ້າເຖິງຂໍ້ມູນຂ່າວສານດ້ານສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ (SRH) ຂອງໄວຫນຸ່ມ, ລັດຖະບານຈະ

- ເພີ່ມຄວາມຕ້ອງການສຳລັບຂໍ້ມູນ ແລະ ການບໍລິການວາງແຜນຄອບຄົວທີ່ມີຄຸນນະພາບໂດຍຜ່ານການບໍລິການທີ່ເປັນມິດຕໍ່ໄວໜຸ່ມໃນທຸກລະດັບ.
- ຮັບປະກັນການເຂົ້າເຖິງການໃຫ້ຄຳປຶກສາ ແລະ ຂໍ້ມູນການວາງແຜນຄອບຄົວ ແລະ ການບໍລິການທີ່ມີຄຸນນະພາບ ໂດຍໃຫ້ມີວິທີຄຸມກຳເນີດທີ່ຄົບຖ້ວນ ໃນທຸກຂັ້ນຂອງລະບົບການໃຫ້ບໍລິການດ້ານສຸຂະພາບ.
- ຮັບປະກັນຄວາມພ້ອມຂອງພະນັກງານສາທາລະນະສຸກໃຫ້ມີຄວາມສາມາດ ແລະ ເຫັນອົກເຫັນໃຈ ແລະ ມີແຮງຈູງໃຈສຳລັບການບໍລິການວາງແຜນຄອບຄົວ ແລະ ເປັນມິດຕໍ່ໄວໜຸ່ມໂດຍການບໍລິການເຄື່ອນທີ່ ແລະ ການຕິດຕາມ.
- ປັບປຸງຄວາມພ້ອມຂອງການບໍລິການວາງແຜນຄອບຄົວທີ່ມີຄຸນນະພາບໃນໄລຍະຫຼັງເກີດລູກ ແລະ ຫຼຸລູກ
- ຮັບປະກັນຄວາມພ້ອມຂອງມາດຕະຖານຂອງສະຖານບໍລິການທີ່ໃຫ້ບໍລິການ ແລະ ການບໍລິການທີ່ເປັນມິດຕໍ່ໄວໜຸ່ມ ຫຼື ການວາງແຜນຄອບຄົວ (YFS/FP) ເຊື່ອມສານເຂົ້າໃນຈຸດບໍລິການສຸຂະພາບ.

## 3. ເພີ່ມຄວາມພ້ອມ (ບໍ່ໃຫ້ມີການຂາດສາງ) ຂອງ ຜະລິດຕະພັນວິທີຄຸມກຳເນີດ ຫຼື ຜະລິດຕະພັນສຳລັບ ສຸຂະພາບຈະເລີນພັນໃຫ້ຮອດ 100%

ເພື່ອທີ່ຈະຫຼຸດຜ່ອນສະພາບ "ຜະລິດຕະພັນຢາຂາດສາງ" ຢ່າງໜ້ອຍ 5 ວິທີຄຸມກຳເນີດທີ່ທັນສະໄໝໃນທຸກຂັ້ນ, ລັດຖະບານຈະ:

- ສ້າງຂີດຄວາມສາມາດໃຫ້ແກ່ພະນັກງານສາທາລະນະສຸກເພື່ອມີສ່ວນຮ່ວມໃນການນຳໃຊ້ລະບົບພະລາທິການ ແລະ ລະບົບການຄຸ້ມຄອງການຂົນສົ່ງໃນທຸກລະດັບ
- ສ້າງຄວາມເຂັ້ມແຂງໃນການຄາດຄະເນ, ແຜນສະໜອງຢາ ແລະ ການຄຸ້ມຄອງລະບົບຂໍ້ມູນພະລາທິການໃນຂັ້ນສຸກສາລາ
- ເພີ່ມທະວີການຄວບຄຸມດ້ານຄຸນນະພາບ ແລະ ການຂຶ້ນທະບຽນຜະລິດຕະພັນຢາສຳລັບສຸຂະພາບຈະເລີນພັນ (RHCS) ທັງພາກລັດ, ເອກະຊົນ ແລະ ພາກສ່ວນທີ່ບໍ່ຫວັງຜົນກຳໄລ ທີ່ເຮັດວຽກກ່ຽວກັບຜະລິດຕະພັນ ແລະ ການຂົນສົ່ງ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການຕິດຕາມ ແລະ ປະເມີນຜົນເພື່ອການຕັດສິນໃຈ ແລະ ຂັບເຄື່ອນອີງໃສ່ຂໍ້ມູນ ເພື່ອການຄຸ້ມຄອງການສະໜອງ ແລະ ການຂົນສົ່ງທີ່ເໝາະສົມ ແລະ ມີປະສິດທິພາບ.

This infographic is made possible by the support of the American People through the U.S. Agency for International Development under the Knowledge SUCCESS (Strengthening Use, Capacity, Collaboration, Exchange, Synthesis, and Sharing) Project Cooperative Agreement No. 7200AA19CA00001 with the Johns Hopkins University. Knowledge SUCCESS is supported by USAID's Bureau for Global Health, Office of Population and Reproductive Health and led by the Johns Hopkins Center for Communication Programs (CCP) in partnership with Amref Health Africa, The Busara Center for Behavioral Economics (Busara), and FHI 360. The information provided in this infographic are the sole responsibility of Knowledge SUCCESS and does not necessarily reflect the views of USAID, the U.S. Government, or the Johns Hopkins University.

## ຈຸດປະສົງຂອງຄຳໝັ້ນສັນຍາດ້ານງົບປະມານ: ເພີ່ມທະວີງົບປະມານເຂົ້າໃນວຽກງານວາງແຜນຄອບຄົວ ເພື່ອສະໜັບສະໜູນໃຫ້ມີຄວາມພ້ອມຂອງການບໍລິການ ແລະ ຜະລິດຕະພັນໃນລະດັບທ້ອງຖິ່ນ



ເພື່ອຮັບປະກັນດ້ານງົບປະມານ, ລັດຖະບານແຫ່ງ ສປປ ລາວ ຈະເພີ່ມທະວີງົບປະມານພາຍໃນ ເພື່ອສະໜອງທຶນໃຫ້ແກ່ການຈັດຊື້ຜະລິດຕະພັນວາງແຜນຄອບຄົວຢ່າງໜ້ອຍ 5% ຕໍ່ປີ ແລະ ເບີກຈ່າຍຢ່າງຄົບຖ້ວນ.

**ພ້ອມນີ້ ພວກເຮົາຍັງຈະ:**

- ໃຊ້ຕົວແບບ ແລະ ເຄື່ອງມືທີ່ມີຢູ່ເພື່ອສ້າງຫຼັກຖານໃນການປະກອບສ່ວນດ້ານການວາງແຜນຄອບຄົວ ເພື່ອວັດແທກ ແລະ ປັບປຸງຜົນໄດ້ຮັບດ້ານສຸຂະພາບແມ່.
- ການມີສ່ວນຮ່ວມຂອງບັນດາສະມາຊິກລັດຖະສະພາ ແລະ ຂະແໜງການອື່ນໆ ເພື່ອສືບຕໍ່ສົ່ງເສີມການເພີ່ມການຈັດສັນງົບປະມານ ແລະ ການເບີກຈ່າຍຢ່າງທັນເວລາ.
- ເສີມຂະຫຍາຍຄວາມພະຍາຍາມໃນການສົ່ງເສີມຂອງອົງການຈັດຕັ້ງທາງສັງຄົມ ຕໍ່ກັບການເຂົ້າເຖິງງົບປະມານດ້ານການວາງແຜນຄອບຄົວຈາກກອງທຶນພາຍນອກ ແລະ ຈາກກອງທຶນສຳລັບການກຽມຄວາມພ້ອມໃນກໍລະນີສຸກເສີນ.
- ສ້າງຄວາມເຂັ້ມແຂງໃນການນຳໃຊ້ຂໍ້ມູນເພື່ອຕັດສິນໃຈໃນການເພີ່ມການຈັດສັນງົບປະມານ ແລະ ການເບີກຈ່າຍໃຫ້ແກ່ວຽກງານຍຸທະສາດສຸຂະພາບຈະເລີນພັນ ແມ່, ເດັກເກີດໃໝ່, ເດັກ ແລະ ໄວໜຸ່ມລວມທັງແຜນງານວາງແຜນຄອບຄົວ.
- ລະດົມພາກເອກະຊົນໃຫ້ປະກອບສ່ວນເຂົ້າໃນການສະໜອງງົບປະມານໃສ່ວຽກງານວາງແຜນຄອບຄົວ
- ລວມເອົາການວາງແຜນຄອບຄົວເຂົ້າໃນວຽກງານປະກັນສຸຂະພາບ ຂອງພາກລັດ ແລະ ເອກະຊົນ

# ແນວທາງຄວາມຮັບຜິດຊອບຕໍ່ຄຳໝັ້ນສັນຍາ

**ສປປ ລາວ ຈະນຳໃຊ້:**

- ຊ່ອງທາງໃນການສັງລວມວຽກງານວາງແຜນຄອບຄົວເຊັ່ນ: ລະບົບ DHIS2, ການສຳຫຼວດ ແລະ ການສຳຫຼວດປະຊາກອນ
- ກອງປະຊຸມລາຍງານຄວາມຄືບໜ້າປະຈຳໄຕມາດ ເຊິ່ງຈັດຂຶ້ນໂດຍອົງການຈັດຕັ້ງທາງສັງຄົມ ແລະ ຕາງໜ້າຜູ້ປະສານງານໄວໜຸ່ມ
- ກອງປະຊຸມທົບທວນທຸກໆ 6 ເດືອນ ເຊິ່ງນຳພາໂດຍ ກະຊວງສາທາລະນະສຸກ
- ເວທີທີ່ເປັນຊ່ອງທາງໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງໃນການແບ່ງປັນຄວາມຄືບໜ້າຂອງວຽກງານຢ່າງເປັນປົກກະຕິ



**ລັດຖະບານແຫ່ງ ສປປ ລາວ ຈະນຳໃຊ້ແນວທາງຄວາມຮັບຜິດຊອບຮ່ວມກັນເພື່ອເພື່ອຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຄຳໝັ້ນສັນຍາ. ແນວທາງດັ່ງກ່າວຈະເປີດໂອກາດໃຫ້ແກ່ການສົນທະນາ ແລະ ການຮ່ວມມືລະຫວ່າງບັນດາອົງການຈັດຕັ້ງຂອງລັດຖະບານ, ອົງການຈັດຕັ້ງສັງຄົມ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງສຳຄັນອື່ນໆ ເພື່ອປະຕິບັດ, ທົບທວນ-ກວດກາ ແລະ ຕິດຕາມຄວາມຄືບໜ້າຂອງຄຳໝັ້ນສັນຍາ** FP2030 **ຂອງປະເທດ**

# ຫຼັກການໃນການໃຫ້ຄຳໝັ້ນສັນຍາ:

**ຄຳໝັ້ນສັນຍາຕໍ່** FP2030 **ຄວນ...**

- ສອດຄ່ອງກັບວຽກງານການຮ່ວມມືອື່ນໆຂອງປະເທດ
- ອີງໃສ່ຂໍ້ມູນ ແລະ ຫຼັກຖານຕົວຈິງ
- ກ່ຽວຂ້ອງກັບ 5 ຂົງເຂດຈຸດສຸມຂອງ FP2030 ຄື:
  - ນະໂຍບາຍ
  - ຂໍ້ມູນ
  - ການເງິນ
  - ບັນທັດຖານທາງເພດ
  - ລະບົບ
  - ການຕອບສະໜອງ
- ຄຳໝາຍໝັ້ນໄດ້ຖືກສ້າງຂຶ້ນ ແລະ ຮັບຮອງໂດຍການມີສ່ວນຮ່ວມທີ່ໂປ່ງໃສ ແລະ ເທົ່າທຽມກັນ

ອ່ານເພີ່ມເຕີມກ່ຽວກັບຄຳໝັ້ນສັນຍາຂອງ ສປປ ລາວ

ຮຽນຮູ້ເພີ່ມເຕີມກ່ຽວກັບຂະບວນການໄດ້ທີ່ນີ້

# ບັນດາຂັ້ນຕອນທີ່ຄວນພິຈາລະນາ ເມື່ອຖະແຫຼງຄຳໝາຍໝັ້ນສັນຍາ

